ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງໄຊຍະບູລີ

ເລກທີ .79.../ສພຂ
ໄຊຍະບູລີ, ວັນທີ ..5...ທັນວາ 2025

# ມະຕິ
## ກອງປະຊຸມສະພາປະຊາຊົນແຂວງ
## ວ່າດ້ວຍການຮັບຮອງເອົາ ໂຄງປະກອບກົງຈັກການຈັດຕັ້ງ ຄະນະກຳມະການປົກຄອງ ແລະ ບຸກຄະລາກອນທີ່ເປັນກຳມະການ ຄະນະກຳມະການປົກຄອງແຂວງໄຊຍະບູລີ

- ອີງຕາມ ມາດຕາ 12, ມາດຕາ 56 ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ), ເລກທີ 57/ສພຊ, ລົງວັນທີ 28 ມິຖຸນາ 2025;
- ອີງຕາມ ໜັງສືສະເໜີຂອງປະທານອົງການປົກຄອງແຂວງ, ສະບັບເລກທີ 01/ຊຍ, ລົງວັນທີ 5 ທັນວາ 2025 ກ່ຽວກັບໂຄງປະກອບກົງຈັກການຈັດຕັ້ງຄະນະກຳມະການປົກຄອງ ແລະ ບຸກຄະລາກອນທີ່ເປັນກຳມະການ ຄະນະກຳມະການປົກຄອງແຂວງໄຊຍະບູລີ;

ຜ່ານການຄົ້ນຄວ້າ ພິຈາລະນາ ປະກອບຄຳເຫັນຢ່າງຖີ່ຖ້ວນ ຂອງບັນດາສະມາຊິກສະພາປະຊາຊົນແຂວງ ໃນວາລະກອງປະຊຸມສະໄໝວິສາມັນ ເທື່ອທີ 2 ຂອງສະພາປະຊາຊົນແຂວງໄຊຍະບູລີ ຊຸດທີ IV ດັ່ງວັນທີ 5 ທັນວາ 2025.

## ກອງປະຊຸມ ຕົກລົງ:

**ມາດຕາ 1** ຮັບຮອງເອົາໂຄງປະກອບກົງຈັກການຂອງຄະນະກຳມະການປົກຄອງແຂວງ ຊຸດທີ VIII ເຊິ່ງປະກອບມີ 11 ພະແນກການ, 02 ກອງບັນຊາການ ປກຊ-ປກສ ແຂວງ ແລະ 01 ອົງການທຽບເທົ່າພະແນກການ ດັ່ງນີ້:

1. ກອງບັນຊາການທະຫານແຂວງ.
2. ກອງບັນຊາການປ້ອງກັນຄວາມສະຫງົບແຂວງ.
3. ພະແນກການຕ່າງປະເທດແຂວງ.
4. ຫ້ອງວ່າການແຂວງ.
5. ພະແນກຍຸຕິທຳແຂວງ.
6. ພະແນກສຶກສາທິການ ແລະ ກິລາແຂວງ.
7. ພະແນກວັດທະນະທຳ ແລະ ການທ່ອງທ່ຽວແຂວງ.
8. ພະແນກສາທາລະນະສຸກແຂວງ.
9. ພະແນກການເງິນແຂວງ.
10. ພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ.
11. ພະແນກອຸດສາຫະກຳ ແລະ ການຄ້າແຂວງ.
12. ພະແນກໂຍທາທິການ ແລະ ຂົນສົ່ງແຂວງ.
13. ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ.
14. ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ.



สแกนด้วย CamScanner
สแกนด้วย CamScanner

**ມາດຕາ 2** ຮັບຮອງເອົາການສ້າງຕັ້ງກົງຈັກການຈັດຕັ້ງຂອງຫ້ອງການ ແລະ ອົງການທຽບເທົ່າພະແນກການຄື:

1. ຮັບຮອງເອົາການສ້າງຕັ້ງອົງການພັດທະນາ ແລະ ບໍລິຫານຕົວເມືອງ.
2. ຮັບຮອງເອົາການສ້າງຕັ້ງຫ້ອງການຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນແຂວງ.

**ມາດຕາ 3** ຮັບຮອງເອົາການສະເໜີແຕ່ງຕັ້ງ ຮອງປະທານຄະນະກຳມະການປົກຄອງແຂວງ ແລະ ກຳມະການຄະນະກຳມະການປົກຄອງແຂວງ.

**1) ຮອງປະທານຄະນະກຳມະການປົກຄອງແຂວງ ຈຳນວນ 2 ທ່ານ ດັ່ງນີ້:**

1. ທ່ານ ອາເມ ຊົ່ງເຢັ້ງເລັ້ງ — ເປັນຮອງປະທານຄະນະກຳມະການປົກຄອງແຂວງ.
2. ທ່ານ ບຸດສະກອນ ອິນທະລັງສີ — ເປັນຮອງປະທານຄະນະກຳມະການປົກຄອງແຂວງ.

**2) ກຳມະການ ຄະນະກຳມະການປົກຄອງແຂວງ ຈຳນວນ 16 ທ່ານ ຍິງ 3 ທ່ານ ດັ່ງນີ້:**

1. ທ່ານ ພົ.ວ ປອ ບຸນຍອງ ດວງດີ — ເປັນຫົວໜ້າການທະຫານ ກອງບັນຊາການທະຫານແຂວງ.
2. ທ່ານ ພັ.ອ ຄຳສິນ ຜິວວັນນາ — ເປັນຫົວໜ້າກອງບັນຊາການ ປກສ ແຂວງ.
3. ທ່ານ ນາງ ໄກຍະສອນ ສີດາ — ເປັນຫົວໜ້າພະແນກສາທາລະນະສຸກແຂວງ.
4. ທ່ານ ປອ ພຸດທະຈອນ ປິ່ນທິບ — ເປັນຫົວໜ້າຫ້ອງວ່າການແຂວງ.
5. ທ່ານ ອິນທີ ຈັນປະເສີດເຮີ — ເປັນຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ.
6. ທ່ານ ນາງ ພິລາວັນ ອົງເຜົ້າ — ເປັນຫົວໜ້າພະແນກວັດທະນະທຳ ແລະ ການທອງທ່ຽວແຂວງ.
7. ທ່ານ ທະວີສັກ ໄຊຍະວົງ — ເປັນຫົວໜ້າພະແນກການເງິນແຂວງ.
8. ທ່ານ ປອ ສົມພັນ ແພງສີດາ — ເປັນຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ.
9. ທ່ານ ປອ ໄຊພອນ ບຸນຊູ — ເປັນຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ.
10. ທ່ານ ແພງຊ້ອຍ ແພງເມືອງ — ເປັນຫົວໜ້າພະແນກໂຍທາທິການແລະ ຂົນສົ່ງແຂວງ.
11. ທ່ານ ໜູພອນ ໄຊປັນຍາຈິດ — ເປັນຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ.
12. ທ່ານ ບຸນລ້ຽງ ດວງສົມພອນ — ເປັນຫົວໜ້າພະແນກຍຸຕິທຳແຂວງ.
13. ທ່ານ ສອນສະຫວັນ ຈັນທະວົງ — ເປັນຫົວໜ້າພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ.
14. ທ່ານ ນາງ ສຸດາພອນ ດວງຫຼ້າ — ເປັນຫົວໜ້າພະແນກການຕ່າງປະເທດແຂວງ.
15. ທ່ານ ບົວແພງ ອິນທະວົງ — ເປັນຫົວໜ້າອົງພັດທະນາ ແລະ ບໍລິຫານຕົວເມືອງ.
16. ທ່ານ ຄຳໄຊເລົ່າ ລີເຕ່ຊາ — ເປັນຫົວໜ້າຫ້ອງການຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນແຂວງ.

**ມາດຕາ 4** ບັນດາອົງການຈັດຕັ້ງພັກ-ລັດ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການປົກຄອງທ້ອງຖິ່ນ ແລະ ພວກກ່ຽວ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ມາດຕາ 5** ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

**ເພັງນິລັນ ຄຳພັນເພັງ**



สแกนด้วย CamScanner
สแกนด้วย CamScanner